ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***** ***** ***** ***** *****

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0 1 7 3[redacted]/ກປ.05

ນະຄອນຫຼວງວຽງຈັນ, ວັນທີ ......0 2 AUG 2005

# ຂໍ້ຕົກລົງ

## ຂອງລັດຖະມົນຕີ

## ວ່າດ້ວຍ ການຟື້ນຟູ ປ່າໄມ້ທຳມະຊາດ

- ອີງຕາມ ກົດໝາຍປ່າໄມ້ ສະບັບເລກທີ 01-96/ສພຊ, ລົງວັນທີ 11/10/1996.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 189/ນຍ, ລົງວັນທີ 22/06/1999 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້.

**ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

ກະຊວງກະສິກຳແລະປ່າໄມ້ ລັດຖະມົນຕີ

## ໝວດທີ I

## ບົດບັນຍັດທົ່ວໄປ

ມາດຕາ 1 **ຈຸດປະສົງ**

1.1 ເພື່ອເຮັດໃຫ້ ການຟື້ນຟູປ່າໄມ້ທຳມະຊາດ ຢູ່ ສປປ ລາວ ເປັນລະບົບ ທີ່ເປັນເອກະພາບ ໃນຂອບເຂດທົ່ວປະເທດ; ມີປະສິດຕິຜົນ ແລະ ໄດ້ຮັບຜົນສຳເລັດ ເປັນຢ່າງດີ ໂດຍສອດຄ່ອງ ກັບເນື້ອໃນຈິດໃຈ ກົດໝາຍປ່າໄມ້ ແລະ ຖືກຕ້ອງ ຕາມລະບຽບການ ກ່ຽວຂ້ອງຕ່າງໆ.

1.2 ເພື່ອເຮັດໃຫ້ ພື້ນທີ່ປ່າໄມ້ທຳມະຊາດ ທີ່ມີສະພາບຊຸດໂຊມ ຍ້ອນການຖາງປ່າເຮັດໄຮ່, ໄຟໄໝ້ລາມປ່າ ແລະ ການຂຸດຄົ້ນໄມ້ ໃນໄລຍະຜ່ານມາ ໃຫ້ກາຍເປັນປ່າດົງຄືນໃໝ່ ທີ່ປະກອບດ້ວຍຊະນິດພັນໄມ້ ທີ່ມີຄຸນຄ່າທາງດ້ານເສດຖະກິດ ແລະ ສືບຕໍ່ເຮັດໜ້າທີ່ປ້ອງກັນ ແລະ ປົກປັກຮັກສາສິ່ງແວດລ້ອມ, ແຫຼ່ງນ້ຳ, ດິນ, ສັດປ່າ-ສັດນ້ຳ ແລະ ເປັນແຫຼ່ງສະໜອງ ໄມ້ ແລະ ຜະລິດຕະພົນປ່າໄມ້ ຢ່າງບໍ່ຂາດແຫ້ງ.

1.3 ເພື່ອກະຕຸກຊຸກຍູ້ ແລະ ສົ່ງເສີມ ໃຫ້ມີການປະກອບສ່ວນ ຂອງປະຊາຊົນ, ການຈັດຕັ້ງ ທັງພາກລັດ ແລະ ເອກະຊົນ ແລະ ພາກສ່ວນເສດຖະກິດອື່ນໆ ເຂົ້າໃນການຟື້ນຟູປ່າໄມ້ ຢ່າງຕັ້ງໜ້າ.

ມາດຕາ 2 ນິຍາມ

2.1 ການຟື້ນຟູປ່າໄມ້ທຳມະຊາດ: ແມ່ນການນຳໃຊ້ ມາດຕາການ ໃນການຄຸ້ມຄອງ, ປົວລະບັດຮັກສາ ຕົ້ນໄມ້ ທີ່ເກີດຂຶ້ນຕາມທຳມະຊາດ ແລະ ການປູກເສີມ ພັນໄມ້ຊະນິດຕ່າງໆ ທີ່ເຫັນວ່າ ມີຄວາມຈຳເປັນ ຕ້ອງໄດ້ຮັບການຟື້ນຟູ ຢູ່ໃນເຂດປ່າໄມ້ ທີ່ໄດ້ຖືກກຳນົດ ເປັນເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍນຳໃຊ້ ເຕັກນິກວິຊາການ ທີ່ຖືກຕ້ອງ ແລະ ເໝາະສົມ.

2.2 ເຂດຟື້ນຟູປ່າໄມ້ທຳມະຊາດ: ແມ່ນເຂດເນື້ອທີ່ປ່າໄມ້ ທີ່ມີຄວາມໜາແໜ້ນ ຂອງຊັ້ນເຮືອນຍອດ ຂອງຕົ້ນໄມ້ ຕ່ຳກວ່າ 20% ແລະ ສະເລ່ຍບໍລິມາດໄມ້ ທີ່ມີໜ້າຕ້າງ ແຕ່ 20 ຊັງຕີແມັດ ຂຶ້ນໄປ ຢູ່ໃນລະຫວ່າງ 30-70 ແມັດກ້ອນ ຕໍ່ເຮັກຕາ ຫຼື ເຂດເນື້ອທີ່ປ່າໄມ້ ທີ່ມີສະພາບເປັນປ່າເລົ່າ ແລະ ປ່າຊຸດໂຊມ ທີ່ນອນຢູ່ໃນແຕ່ລະປະເພດປ່າໄມ້ ແລະ ຖືກກຳນົດໄວ້ ເພື່ອຟື້ນຟູ ໃຫ້ກາຍເປັນປ່າໄມ້ ທີ່ອຸດົມສົມບູນ ຄືນໃໝ່.

2.3 ເຂດປ່າເລົ່າ: ແມ່ນເຂດເນື້ອທີ່ປ່າໄມ້ ທີ່ມີການຖາງປ່າເຮັດໄຮ່ ຫຼື ຖືກບຸກລຸກທຳລາຍດ້ວຍຮູບການຕ່າງໆ ເປັນເວລາຫຼາຍປີມາແລ້ວ, ຊຶ່ງຄວາມສູງສະເລັ່ຍ ຂອງຕົ້ນໄມ້ ຕ່ຳກວ່າ 5 ແມັດ ລົງມາ.

## ໝວດທີ II

## ການກຳນົດເຂດ, ຮູບແບບ ແລະ ຫຼັກການ ຟື້ນຟູປ່າໄມ້ທຳມະຊາດ

**ມາດຕາ 3 ການກຳນົດ ເຂດຟື້ນຟູປ່າໄມ້ທຳມະຊາດ**

ການກຳນົດ ເຂດຟື້ນຟູປ່າໄມ້ທຳມະຊາດ ແມ່ນບົນພື້ນຖານ ຂອງການສຳຫຼວດ ແລະ ປະເມີນຜົນກ່ຽວກັບ ຄວາມອຸດົມສົມບູນຂອງປ່າໄມ້, ຄວາມອາດສາມາດ ໃນການສືບພັນຕາມທຳມະຊາດ ແລະ ອື່ນໆ ເພື່ອກຳນົດ ເປັນເຂດຟື້ນຟູປ່າໄມ້ທຳມະຊາດ ຕາມທີ່ໄດ້ລະບຸໄວ້ ຢູ່ໃນຂໍ້ 2.2, ມາດຕາ 2 ຂອງຂໍ້ຕົກລົງສະບັບນີ້. ເຂດຟື້ນຟູປ່າໄມ້ທຳມະຊາດ ສາມາດນອນຢູ່ໃນ ແຕ່ລະປະເພດປ່າໄມ້ ເຊັ່ນ: ປ່າຜະລິດ, ປ່າປ້ອງກັນ, ປ່າສະຫງວນ ຫຼື ປ່າຊົມໃຊ້ຂອງບ້ານ ທີ່ຖືກກຳນົດ ແລະ ໄດ້ຈັດແບ່ງໄວ້ ສຳລັບ ການຟື້ນຟູປ່າໄມ້.

**ມາດຕາ 4 ຮູບແບບ ການຟື້ນຟູປ່າໄມ້ທຳມະຊາດ**

ການຟື້ນຟູປ່າໄມ້ທຳມະຊາດ ມີ 2 ຮູບແບບ ຄື:

4.1 ການຟື້ນຟູປ່າໄມ້ ແບບທຳມະຊາດ ແມ່ນການຂະຫຍາຍພັນ ດ້ວຍແກ່ນ, ຮາກ, ເຫງົ້າ ຫຼື ຕໍໄມ້ ຕາມທຳມະຊາດ ຂອງພັນໄມ້ຊະນິດຕ່າງໆ ທີ່ເກີດຢູ່ໃນເຂດຟື້ນຟູປ່າໄມ້.

4.2 ການຟື້ນຟູປ່າໄມ້ ແບບປູກເສີມ ແມ່ນການປູກເສີມ ພັນໄມ້ຊະນິດຕ່າງໆ ທີ່ເຫັນວ່າ ເໝາະສົມ ໂດຍສອດຄ່ອງ ຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການຟື້ນຟູປ່າໄມ້ ຢູ່ໃນເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍສະເພາະ ແມ່ນບ່ອນ ທີ່ຄວາມໜາແໜ້ນຂອງຕົ້ນໄມ້ຕ່ຳ, ບ່ອນທີ່ ການກະຈາຍຂອງຊະນິດພັນໄມ້ ທີ່ເກີດຕາມທຳມະຊາດ ບໍ່ສະໝ່ຳສະເໝີ ຫຼື ບາງຊະນິດພັນໄມ້ດັ່ງເດີມ ທີ່ມີຢູ່ໃນເຂດດັ່ງກ່າວ ມີຄວາມສ່ຽງຂອງການສູນພັນ ຫຼື ຖືກດັບສູນແລ້ວ, ແຕ່ເຫັນມີຄວາມຈຳເປັນຕ້ອງໄດ້ຮັບການຟື້ນຟູຄືນ.

ກະຊວງກະສິກຳແລະປ່າໄມ້
ລັດຖະມົນຕີ

**ມາດຕາ 5 ຫຼັກການ ຟື້ນຟູປ່າໄມ້ ແບບທຳມະຊາດ**

ຫຼັກການຟື້ນຟູປ່າໄມ້ ແບບທຳມະຊາດ ແມ່ນການນຳໃຊ້ ມາດຕະການ ຄຸ້ມຄອງ ແລະ ບົວລະບັດ ຮັກສາ ສະຖານະພາບຂອງປ່າໄມ້ ທີ່ໄດ້ກຳນົດ ເປັນເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍສະເພາະ ແມ່ນການປ້ອງກັນ ບໍ່ໃຫ້ເກີດມີໄຟໄໝ້ລາມປ່າ, ບໍ່ໃຫ້ມີການບຸກລຸກທຳລາຍ ຂອງສັດລ້ຽງ ຫຼື ການດຳເນີນ ກິດຈະການຕ່າງໆ ແລະ ອື່ນໆ ເພື່ອແນໃສ່ເຮັດໃຫ້ເບ້ຍໄມ້ ຫຼື ຕົ້ນໄມ້ນ້ອຍ ສາມາດ ຟື້ນຟູ ແລະ ຈະເລີນເຕີບໂຕ ດ້ວຍຕົວມັນເອງ ຕາມທຳມະຊາດ.

**ມາດຕາ 6 ຫຼັກການຟື້ນຟູປ່າໄມ້ ແບບປູກເສີມ**

ຫຼັກການຟື້ນຟູປ່າໄມ້ ແບບປູກເສີມ ແມ່ນການນຳເອົາແກ່ນ, ເບ້ຍໄມ້ ທີ່ໄດ້ຈາກທຳມະຊາດ ຫຼື ຈາກການຂະຫຍາຍພັນ ທາງດ້ານຊີວະສາດ ຂອງຊະນິດພັນໄມ້ ທີ່ມີຄຸນຄ່າ ທາງດ້ານເສດຖະກິດ, ປ້ອງກັນສະພາບແວດລ້ອມ ຫຼື ບາງຊະນິດພັນໄມ້ ທີ່ມີຖິ່ນກຳເນີດດັ່ງເດີມ ໄປປູກເສີມໃສ່ ເຂດ ທີ່ໄດ້ກຳນົດໄວ້ ເປັນເຂດຟື້ນຟູປ່າໄມ້ ເພື່ອແນໃສ່ ປັບປຸງໂຄງປະກອບສ້າງ ແລະ ຄຸນນະພາບ ຂອງປ່າໄມ້ ໃຫ້ອຸດົມສົມບູນ ແລະ ເຮັດໜ້າທີ່ ຕາມຈຸດປະສົງ ຂອງການຟື້ນຟູປ່າໄມ້.

**ມາດຕາ 7 ຫຼັກການຟື້ນຟູປ່າໄມ້ ໃນເຂດປ່າສະຫງວນ**

ຫຼັກການຟື້ນຟູປ່າໄມ້ ໃນເຂດປ່າສະຫງວນ ແມ່ນການຄັດເລືອກເອົາ ຊະນິດພັນໄມ້ ທີ່ສາມາດ ຕອບສະໜອງ ຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການຟື້ນຟູປ່າໄມ້ ຢູ່ໃນເຂດປ່າດັ່ງກ່າວ ໂດຍສະເພາະ ແມ່ນເພື່ອຕອບສະໜອງ ຕາມຈຸດປະສົງ ຂອງການອະນຸລັກ ປົກປັກຮັກສາ ທຳມະຊາດ, ຊັບພະຍາກອນປ່າໄມ້, ພັນສັດ, ພັນພືດ, ແລະ ສິ່ງຕ່າງໆ ທີ່ມີຄຸນຄ່າ ທາງ ປະຫວັດສາດ, ວັດທະນາທຳ, ການທ່ອງທ່ຽວ, ການສຶກສາ ແລະ ການຄົ້ນຄວ້າທົດລອງ ທາງດ້ານວິທະຍາສາດ.

**ມາດຕາ 8 ຫຼັກການຟື້ນຟູປ່າໄມ້ ໃນເຂດປ່າປ້ອງກັນ**

ຫຼັກການຟື້ນຟູປ່າໄມ້ ໃນເຂດປ່າປ້ອງກັນ ແມ່ນການຄັດເລືອກເອົາ ຊະນິດພັນໄມ້ ທີ່ສາມາດ ຕອບສະໜອງ ຕາມຈຸດປະສົງ ແລະ ເປົ້າໝາຍ ຂອງການຟື້ນຟູປ່າໄມ້ ຢູ່ໃນເຂດປ່າດັ່ງກ່າວ ໂດຍສະເພາະ ແມ່ນເພື່ອຕອບສະໜອງ ຕາມຈຸດປະສົງ ການປ້ອງກັນ ແຫຼ່ງນ້ຳ; ປ້ອງກັນການ ເຊາະເຈື່ອນຂອງດິນ; ປ້ອງກັນໄພທຳມະຊາດ; ປ້ອງກັນສະພາບແວດລ້ອມ, ເຂດຍຸດທະສາດ ປ້ອງກັນຊາດ ແລະ ອື່ນໆ.

**ມາດຕາ 9 ຫຼັກການຟື້ນຟູປ່າໄມ້ ໃນເຂດປ່າຜະລິດ**

ຫຼັກການຟື້ນຟູປ່າໄມ້ ໃນເຂດປ່າຜະລິດ ແມ່ນການຟື້ນຟູປ່າໄມ້ ທີ່ມີຈຸດປະສົງ ເພື່ອແນໃສ່ ປັບປຸງ ໂຄງປະກອບສ້າງຂອງປ່າໄມ້ ຢູ່ໃນເຂດປ່າດັ່ງກ່າວ ໃຫ້ອຸດົມສົມບູນ, ຊຶ່ງປະກອບດ້ວຍ ຊະນິດ ພັນໄມ້ ທີ່ມີຄຸນຄ່າທາງດ້ານເສດຖະກິດສູງ ເພື່ອຮັບປະກັນ ໃຫ້ແກ່ການນຳໃຊ້ ແລະຕອບສະໜອງ ຄວາມຮຽກຮ້ອງຕ້ອງການ ວັດຖຸດິບດ້ານໄມ້ ແລະ ຜະລິດຕະພັນປ່າໄມ້ ຢ່າງພຽງພໍ ເຂົ້າໃນ ວຽກງານ ພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ ແລະ ຮັບໃຊ້ຊີວິດ ການເປັນຢູ່ຂອງປະຊາຊົນ.



## ໝວດທີ III

## ບັນດາກິດຈະກຳຕ່າງໆ ໃນວຽກງານຟື້ນຟູປ່າໄມ້ທຳມະຊາດ

**ມາດຕາ 10 ການໝາຍ ເຂດແດນ ຟື້ນຟູປ່າໄມ້ທຳມະຊາດ**

ພາຍຫຼັງ ສຳເລັດການກຳນົດ ເປັນເຂດຟື້ນຟູປ່າແລ້ວ, ໜ່ວຍງານປ່າໄມ້ເມືອງ ຕ້ອງໄດ້ດຳເນີນການໝາຍເຂດແດນ ດ້ວຍການຕິດປ້າຍ ສະແດງຂໍ້ມູນທີ່ສຳຄັນຕ່າງໆ ໂດຍສົມທົບກັບການຈັດຕັ້ງປ່າໄມ້ບ້ານ ແລະ ປະຊາຊົນ ບົນພື້ນຖານ ການປຶກສາຫາລື ກັບອົງການປົກຄອງທ້ອງຖິ່ນ. ນອກຈາກນັ້ນ ຕ້ອງໄດ້ກຳນົດ ພື້ນທີ່ດັ່ງກ່າວ ເຂົ້າໃນແຜນທີ່ ການນຳໃຊ້ທີ່ດິນ.

**ມາດຕາ 11 ການສ້າງແຜນການ ຟື້ນຟູປ່າໄມ້ທຳມະຊາດ**

ພາຍຫຼັງ ທີ່ໄດ້ກຳນົດເປັນເຂດຟື້ນຟູປ່າໄມ້ແລ້ວ, ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ ສົມທົບກັບການຈັດຕັ້ງປ່າໄມ້ບ້ານ ເປັນຜູ້ສ້າງແຜນຟື້ນຟູປ່າໄມ້, ຊຶ່ງຈະຕ້ອງໄດ້ ກຳນົດລະອຽດກ່ຽວກັບ ຈຸດປະສົງ, ເປົ້າໝາຍ ຂອງການຟື້ນຟູໄມ້ ຢູ່ໃນແຕ່ລະປະເພດປ່າ, ເຕັກນິກທີ່ຈະນຳໃຊ້ເຂົ້າໃນການຟື້ນຟູປ່າໄມ້, ຄວາມຕ້ອງການ ທາງດ້ານງົບປະມານ ແລະ ມາດຕະການທີ່ຈຳເປັນໃນການຈັດຕັ້ງປະຕິບັດ ໂດຍພາຍໃຕ້ການຊີ້ນຳ ຂອງຂະແໜງປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ.

**ມາດຕາ 12 ການຮັບຮອງ ແຜນການ ຟື້ນຟູປ່າໄມ້ທຳມະຊາດ**

ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ ເປັນຜູ້ນຳສະເໜີແຜນການຟື້ນຟູປ່າໄມ້ທຳມະຊາດ ໂດຍຜ່ານ ຂະແໜງປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ເພື່ອໃຫ້ພະແນກກະສິກຳ ແລະ ປ່າໄມ້ ພິຈາລະນາຮັບຮອງ ແລ້ວຈຶ່ງສາມາດ ນຳໄປຈັດຕັ້ງປະຕິບັດ.

**ມາດຕາ 13 ການບົວລະບັດຮັກສາ ເຂດຟື້ນຟູປ່າໄມ້ທຳມະຊາດ**

ການບົວລະບັດຮັກສາ ເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍສະເພາະ ແມ່ນການຕັດສາງ, ການລິກິ່ງງ່າ ແລະ ການອານາໄມ ຕ້ອງໄດ້ຈັດຕັ້ງປະຕິບັດ ຢ່າງເປັນປົກກະຕິ ຕາມຫຼັກວິຊາການ ແລະ ຕາມແຜນການ ຟື້ນຟູປ່າໄມ້ ເພື່ອຮັບປະກັນ ໃຫ້ຕົ້ນໄມ້ທີ່ເກີດຂຶ້ນ ຕາມທຳມະຊາດ ແລະ ເບ້ຍໄມ້ທີ່ປູກເສີມ ສາມາດຈະເລີນເຕີບໂຕໄດ້.

**ມາດຕາ 14 ການຄຸ້ມຄອງ, ກວດກາ, ຕິດຕາມ ແລະ ປະເມີນຜົນ**

ການຄຸ້ມຄອງ, ກວດກາ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ຢູ່ໃນເຂດຟື້ນຟູປ່າໄມ້ທຳມະຊາດ ແມ່ນໃຫ້ເອົາແຜນການ ຟື້ນຟູປ່າໄມ້ທຳມະຊາດ ທີ່ໄດ້ຮັບຮອງຈາກພະແນກ ກະສິກຳ ແລະ ປ່າໄມ້ແຂວງ ເປັນມາດຕະຖານ, ຊຶ່ງຈະຕ້ອງໄດ້ດຳເນີນຢ່າງເປັນປົກກະຕິ ເພື່ອຮັບປະກັນ ໃຫ້ການຈັດຕັ້ງປະຕິບັດ ແຜນການດັ່ງກ່າວ ໄດ້ຮັບຜົນສຳເລັດ ຕາມຈຸດປະສົງ ແລະ ຄາດໝາຍ ທີ່ວາງໄວ້.

ກະຊວງ ກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

## ໝວດທີ IV

## ການມີສ່ວນຮ່ວມ ແລະ ການສົ່ງເສີມ ການຟື້ນຟູປ່າໄມ້ທຳມະຊາດ

**ມາດຕາ 15 ການມີສ່ວນຮ່ວມ ໃນວຽກງານຟື້ນຟູປ່າໄມ້ທຳມະຊາດ**

ໜ່ວຍງານປ່າໄມ້ເມືອງ ໂດຍສົມທົບ ກັບການຈັດຕັ້ງປ່າໄມ້ບ້ານ ແລະ ປະຊາຊົນ ຕ້ອງໄດ້ສ້າງຂໍ້ຕົກລົງຮ່ວມ ກ່ຽວກັບການມີສ່ວນຮ່ວມຂອງແຕ່ລະຝ່າຍ ໃນການຈັດຕັ້ງປະຕິບັດແຜນການຟື້ນຟູປ່າໄມ້ທຳມະຊາດ ໂດຍໄດ້ຮັບການຢັ້ງຢືນ ຈາກຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ.

**ມາດຕາ 16 ການສົ່ງເສີມ ການຟື້ນຟູປ່າໄມ້ທຳມະຊາດ**

ລັດ ສົ່ງເສີມ ບຸກຄົນ, ການຈັດຕັ້ງ ແລະ ວິສະຫະກິດ ປະກອບສ່ວນ ເຂົ້າໃນວຽກງານຟື້ນຟູປ່າໄມ້ທຳມະຊາດ ໂດຍມີນະໂຍບາຍອັນເໝາະສົມ ເຊັ່ນ: ຄ່າແຮງງານ, ຕອບສະໜອງທາງດ້ານເຕັກນິກວິຊາການ ແລະ ໃຫ້ການຝຶກອົບຮົມ ໃນວຽກງານຟື້ນຟູປ່າທຳມະຊາດ.

**ມາດຕາ 17 ສິດຊົມໃຊ້ປ່າຟື້ນຟູ**

ບຸກຄົນ, ການຈັດຕັ້ງ ແລະ ວິສະຫະກິດ ທີ່ໄດ້ສຸມທຶນຮອນ ແລະ ເຫື່ອແຮງຂອງຕົນເຂົ້າ ໃນການຟື້ນຟູ ເຂດຟື້ນຟູປ່າທຳມະຊາດ ຈົນເຮັດໃຫ້ປ່າດັ່ງກ່າວ ກາຍເປັນປ່າໄມ້ ທີ່ອຸດົມສົມບູນຄືນ, ຈະມີສິດຊົມໃຊ້ໄມ້, ໄດ້ຮັບຜົນປະໂຫຍດຕ່າງໆ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການຂອງລັດທີ່ໄດ້ປະກາດໃຊ້ ເປັນແຕ່ລະໄລຍະ.

## ໝວດທີ V

## ສິດ ແລະ ໜ້າທີ່ ຂອງຂະແໜງການປ່າໄມ້ ໃນວຽກງານ ຟື້ນຟູປ່າໄມ້ທຳມະຊາດ

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງຂະແໜງປ່າໄມ້ ແຂວງ, ນະຄອນຫຼວງ ແລະ ເຂດພິເສດ**

18.1 ເປັນເສນາທິການ ໃຫ້ແກ່ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ໃນການບໍລິການ ດ້ານເຕັກນິກ ກ່ຽວກັບ ການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ ໂດຍສ້າງເປັນບົດແນະນຳ ທາງດ້ານເຕັກນິກ ແລະ ຈັດການຝຶກອົບຮົມ ໃຫ້ແກ່ພາກສ່ວນກ່ຽວຂ້ອງຕ່າງໆ ຕາມສາຍຕັ້ງ ໃນຂອບເຂດແຂວງຂອງຕົນ.

18.2 ເປັນເສນາທິການ ໃຫ້ແກ່ກົມປ່າໄມ້ ແລະ ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງ ແລະ ເຂດພິເສດ ໃນການຊີ້ນຳ ການຄຸ້ມຄອງ, ຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ ຢູ່ແຕ່ລະເມືອງ ພາຍໃນແຂວງຂອງຕົນ.

18.3 ກວດກາ, ກວດການ ການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ ໃນຂອບເຂດແຂວງຂອງຕົນ ໂດຍມີສິດ ໃຫ້ຄຳແນະນຳ, ຕັກເຕືອນ ແລະ ສັ່ງໂຈະຊົ່ວຄາວ ທຸກການເຄື່ອນໄຫວກິດຈະການ ທີ່ບໍ່ສອດຄ່ອງ ຕາມຈິດໃຈ ຂອງຂໍ້ຕົກລົງສະບັບນີ້ ແລະ ແຜນການຟື້ນຟູປ່າໄມ້ທຳມະຊາດ ທີ່ໄດ້ຮັບຮອງແລ້ວ.

ກະຊວງ ກະສິກຳແລະປ່າໄມ້
ລັດຖະມົນຕີ

**ມາດຕາ 19 ສິດ ແລະ ໜ້າທີ່ ຂອງໜ່ວຍງານປ່າໄມ້ເມືອງ**

19.1 ເປັນເສນາທິການ ໃຫ້ແກ່ຂະແໜງປ່າໄມ້ແຂວງ ແລະ ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ ໃນວຽກງານສົ່ງເສີມ, ການບໍລິການດ້ານເຕັກນິກ ແລະ ການຊີ້ນຳໆພາ ການຈັດຕັ້ງປ່າໄມ້ບ້ານ ຫຼື ກຸ່ມບ້ານ ໃນການສ້າງແຜນການ ແລະ ຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ ໃນຂອບເຂດເມືອງຂອງຕົນ.

19.2 ເປັນເຈົ້າການ ໃນການຄຸ້ມຄອງ, ຕິດຕາມ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ ໃນຂອບເຂດເມືອງ ທີ່ຕົນຮັບຜິດຊອບ.

19.3 ກວດກາ, ກວດການ ການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ ຢູ່ໃນຂອບເຂດເມືອງຂອງຕົນ.

**ມາດຕາ 20 ສິດ ແລະ ໜ້າທີ່ຂອງການຈັດຕັ້ງປ່າໄມ້ບ້ານ**

20.1 ຈັດຕັ້ງປະຕິບັດ ມະຕິ, ຄຳສັ່ງ ແລະ ລະບຽບກົດໝາຍ ທີ່ຂັ້ນເທິງວາງອອກ.

20.2 ເຂົ້າຮ່ວມການຈັດຕັ້ງປະຕິບັດ ແຜນການຟື້ນຟູປ່າໄມ້ທຳມະຊາດ, ເປັນເຈົ້າການ ໃນການປ້ອງກັນ ແລະ ສະກັດກັ້ນ ທຸກຮູບແບບການບຸກລຸກທຳລາຍ ເຂດຟື້ນຟູປ່າໄມ້ທຳມະຊາດ.

20.3 ເຂົ້າຮ່ວມໃນການຕິດຕາມ, ກວດກາ ແລະ ປະເມີນຜົນ ການຈັດຕັ້ງປະຕິບັດແຜນການຟື້ນຟູປ່າໄມ້ທຳມະຊາດ ໃນເຂດທີ່ຕົນມີສ່ວນຮ່ວມ ຕາມຂອບເຂດສິດຂອງຕົນ.

20.4 ລາຍງານ ເຫດການຕ່າງໆ ທີ່ເກີດຂຶ້ນ ຢູ່ໃນເຂດຟື້ນຟູປ່າໄມ້ທຳມະຊາດ ທີ່ຕົນຮັບຜິດຊອບໃຫ້ຂັ້ນເທິງ ຂັ້ນຖັດຕົນໄດ້ຊາບ ຢ່າງເປັນປົກກະຕິ.

20.5 ອອກລະບຽບ ກ່ຽວກັບ ການຄຸ້ມຄອງເຂດຟື້ນຟູປ່າໄມ້ທຳມະຊາດ ພາຍໃນຂອບເຂດບ້ານຂອງຕົນໂດຍສອດຄ່ອງ ກັບກົດໝາຍ ແລະ ລະບຽບການ ທີ່ໄດ້ປະກາດໃຊ້ແລ້ວ.

20.6 ຄຸ້ມຄອງ ການນຳໃຊ້ຊັບພະຍາກອນປ່າໄມ້ ຕາມສິດປະເພນີ ແລະ ລະບຽບການ.

**ມາດຕາ 21 ບັນດາ ຂໍ້ຫ້າມໃນເຂດຟື້ນຟູປ່າໄມ້ທຳມະຊາດ**

21.1 ຫ້າມປ່ຽນແປງ ເຂດແດນ ເຂດຟື້ນຟູປ່າໄມ້ທຳມະຊາດ ໂດຍບໍ່ໄດ້ຮັບ ອະນຸຍາດ ຈາກພາກສ່ວນກ່ຽວຂ້ອງຕ່າງໆ.

21.2 ຫ້າມຫັນປ່ຽນ ເນື້ອທີ່ດິນເຂດຟື້ນຟູປ່າໄມ້ທຳມະຊາດ ທີ່ນອນຢູ່ໃນແຕ່ລະປະເພດປ່າໄມ້ ໄປຮັບໃຊ້ເປົ້າໝາຍອື່ນ ໂດຍບໍ່ໄດ້ຮັບອະນຸຍາດ ຈາກການຈັດຕັ້ງ ທີ່ມີສິດກ່ຽວຂ້ອງ ຢ່າງເດັດຂາດ.

21.3 ຫ້າມບໍ່ໃຫ້ ດຳເນີນການຟື້ນຟູປ່າໄມ້ທຳມະຊາດ ແບບລະບົບສວນປູກ ຊຶ່ງຈະເປັນການ ຫັນປ່ຽນການນຳໃຊ້ທີ່ດິນປ່າໄມ້.

ກະຊວງ ກະສິກຳແລະປ່າໄມ້
ລັດຖະມົນຕີ

## ໝວດທີ VI

## ນະໂຍບາຍຕໍ່ຜູ້ທີ່ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 22 ນະໂຍບາຍ ຕໍ່ຜູ້ທີ່ມີຜົນງານ**

22.1 ການຈັດຕັ້ງປ່າໄມ້ບ້ານ ແລະປະຊາຊົນ ທີ່ໄດ້ປະກອບສ່ວນເຂົ້າໃນການຈັດຕັ້ງປະຕິບັດ ກິດຈະກຳຕ່າງໆ ໃນວຽກງານຟື້ນຟູປ່າໄມ້ທຳມະຊາດ ຈະໄດ້ຮັບຜົນປະໂຫຍດ ຕອບແທນຄ່າແຮງງານ ຕາມທີ່ກຳນົດໄວ້ ຢູ່ໃນຂໍ້ຕົກລົງຮ່ວມ ລະຫວ່າງ ໜ່ວຍງານປ່າໄມ້ເມືອງ ແລະ ການຈັດຕັ້ງປ່າໄມ້ບ້ານ ແລະ ສາມາດນຳໃຊ້ໄມ້, ເຄື່ອງປ່າຂອງດົງ ປະເພດບໍ່ຫວງຫ້າມ ຕາມສິດປະເພນີ ແລະ ລະບຽບການກ່ຽວຂ້ອງ.

22.2 ບຸກຄົນ,ການຈັດຕັ້ງ ແລະ ວິສະຫະກິດ ທີ່ໄດ້ປະກອບສ່ວນ ເຂົ້າໃນວຽກງານ ຟື້ນຟູປ່າໄມ້ທຳມະຊາດ ຈະໄດ້ຮັບ ການຍ້ອງຍໍ ແລະ ນະໂຍບາຍຕ່າງໆ ຈາກລັດ ຕາມຄວາມເໝາະສົມ.

**ມາດຕາ 23 ມາດຕະການ ຕໍ່ຜູ້ທີ່ລະເມີດ**

ບຸກຄົນ ແລະ ການຈັດຕັ້ງ ທີ່ລະເມີດ ຕໍ່ຂໍ້ຕົກລົງສະບັບນີ້ ຈະຕ້ອງຖືກດຳເນີນ ມາດຕະການ ຕາມທີ່ໄດ້ ກຳນົດໄວ້ ຢູ່ມາດຕາ 70, 71, 72 ແລະ 73 ຂອງ ກົດໝາຍ ປ່າໄມ້ ແລະ ກົດລະບຽບຕ່າງໆ ທີ່ອົງການປົກຄອງທ້ອງຖິ່ນ ຮ່ວມກັບປະຊາຊົນ ວາງອອກ.

**ມາດຕາ 24 ການຈັດຕັ້ງປະຕິບັດ**

24.1 ບັນດາກະຊວງ, ອົງການທຽບເທົ່າ, ແຂວງ, ນະຄອນຫຼວງ, ເຂດພິເສດ, ທຸກພາກສ່ວນ ໃນສັງຄົມ ລວມທັງ ບຸກຄົນ ແລະ ການຈັດຕັ້ງ ຈົ່ງຮັບຮູ້ ແລະ ໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

24.2 ມອບໃຫ້ກົມປ່າໄມ້, ພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ແລະ ເຂດພິເສດ ຊີ້ນຳ ຫ້ອງການສົ່ງເສີມ ກະສິກຳ ແລະ ປ່າໄມ້ເມືອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ໃຫ້ມີປະສິດທິຜົນສູງ.

**ມາດຕາ 25 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນ ເປັນຕົ້ນໄປ. ຖ້າວ່າລະບຽບການ, ຂໍ້ກຳນົດ, ບົດແນະນຳ ຫຼື ນິຕິກຳອື່ນໆ ທີ່ກະຊວງກະສິກຳ ແລະ ປ່າໄມ້ ໄດ້ອະນຸມັດປະກາດໃຊ້ ໃນເມື່ອກ່ອນ, ຫາກມີເນື້ອໃນ ບໍ່ຂັດກັບຂໍ້ຕົກລົງສະບັບນີ້ ແມ່ນຖືວ່າ ຍັງມີຜົນບັງຄັບໃຊ້ໄດ້ຕໍ່ໄປ.

ລັດຖະມົນຕີວ່າການ ກະຊວງກະສິກຳ ແລະ ປ່າໄມ້

ສິຕາເຮັ່ງ ຣາຊະພົນ